## ທີ່ເດັດຂອງຊຽງໝ້ຽງ

**-ທ້າວຄຳ :** ໃຜໆກໍບອກວ່າເຈົ້າເປັນຄົນທີ່ສລາດສ້ຽມແຫລມເລີດຄົນມີປັນຍາແລະເກັ່ງທີ່ສຸດໃນໂລກວ່າຊັ້ນ ທັງມີກົນອຸບາຍສາມາດທີ່ຈະຫລອກໃຫ້ໃຜຕໍ່ໃຜເຮັດອີ່ຫຍັງກໍໄດ້ຕາມທີ່ເຈົ້າຕ້ອງການ... ແຕ່ຂ້ອຍຄິດວ່າເຣື້ອງທັງໝົດເຫລົ່ານັ້ນແມ່ນເປັນຄວາມເວົ້າທີ່ຂີ້ຕົວະທັງນັ້ນ... ແຕ່ຫາກເຈົ້າເກັ່ງແທ້ໆກໍລອງອອກອຸບາຍ ຕົວະໃຫ້ຂ້ອຍຍ່າງລົງໄປໃນແມ່ນ້ຳຂອງນີ້ລອງເບິ່ງດຸ່ຊຽງ?

**-ຊຽງໝ້ຽງ :** ຄຳເອີຍ! ຂ້ອຍບໍ່ສາມາດທີ່ຈະຕົວະໃຫ້ຄົນໃດຄົນນຶ່ງຍ່າງລົງໄປໃນແມ່ນ້ຳຂອງນັ້ນໄດ້ດອກ .. ແຕ່ວ່າຂ້ອຍສາມາດທີ່ຈະຕົວະໃຫ້ຄົນ ຍ່າງຂຶ້ນມາຈາກແມ່ນ້ຳຂອງນັ້ນໄດ້ບໍ່ຍາກ !!!

**-ທ້າວຄຳ** ເວົ້າຄືນໄປໃນທັນທີວ່າ "ເອົາກ້າຍ່າງນັ້ນກໍໄດ້ ຂ້ອຍຈະລົງໄປແຊ່ໃນນ້ຳນັ້ນກ່ອນ" ວ່າແລ້ວທ້າວຄຳກໍຍ່າງໂກ້ຍລົງໄປຢູ່ໃນແມ່ນ້ຳຂອງປະມານ 10 ກ້າວດ້ວຍໃບໜ້າທີ່ຍິ້ມແປ້ນ ຄິດວ່າຊຽງໝ້ຽງມື້ນີ້ຈັ່ງໃດກໍແມ່ນຕ້ອງຈົມມູມໂຕຄັກໆ ແລ້ວກໍຫັນໜ້າກັບມາບອກກັບຊຽງໝ້ຽງໄປໃນທັນທີວ່າ "ເອົາລະຊຽງ ! ເຈົ້າກໍລອງຕົວະໃຫ້ຂ້ອຍຂຶ້ນໄປຈາກແມ່ນ້ຳຂອງນີ້ລອງເບິ່ງດຸ່ ກ້າເກັ່ງຈິງດັ່ງກັບຄຳທີ່ເຂົາເລົ່າລືນັ້ນແທ້ ?

**-ຊຽງໝ້ຽງບໍ່ປາກບໍ່ຈາ** ເຮັດຄືກັນກັບຄົນຫົວໜວກກິນຟານ ລຸກຍ່າງໜີອອກໄປຕໍ່ໜ້າຕໍ່ຕາທ້າວຄຳ ໂດຍທີ່ບໍ່ຍອມຕອບຄຳຖາມຂອງທ້າວຄຳທີ່ຢາກຈະໃຫ້ຕົວະຂຶ້ນມາຈາກແມ່ນ້ຳຂອງນັ້ນ..ແລະພຽງຊົ່ວອຶດໃຈດຽວໃນຂນະທີ່ຊຽງໝ້ຽງ ຍ່າງຜ່ານອອກໄປນັ້ນທາງຝ່າຍທ້າວຄຳຊຶ່ງເປັນຜູ້ທີ່ຍອມລົງໄປແຊ່ຢູ່ໃນນ້ຳນັ້ນແລ້ວ ຈຶ່ງມາຊວດຮູ້ເມື່ອຄຶງໄດ້ໃນທັນທີວ່າ ທີ່ຕົນເອງລົງໄປແຊ່ຢູ່ໃນແມ່ນ້ຳນັ້ນໄດ້ກໍດ້ວຍອຸບາຍຂອງຊຽງໝ້ຽງຈອມລວງໂລກນັ້ນເອງ!!! ຄັກເຈົ້າແລ້ວລະບໍ່ບາດນີ້ ! ຄົນເກັ່ງປັນຍາແຫລມຄົມມາກຶກພ້າຂີ້ໝ້ຽງຟັນລົງໄປກາງໜ້າຝາກເຂົ້າຈົນໄດ້!!!



ດຣ.ອິນໂຕຈຳພັນ(ພາບອະດີດ)ເມື່ອຕອນຍັງນ້ອຍໄດ້ອຸບປະສົມບົດເຂົ້າບວດເປັນຈົວນ້ອຍເພື່ອສຶກສາທັມມະແລະຮຽນຮູ້ເຖິງສິ່ງທີ່ຈົບງາມແລະສົມທຽບກ່ຽວກັບຝ່າຍທັມແລະທາງໂລກແລະໃຫ້ເກີດຄວາມໂປ່ງໃສພາຍໃນກາຍໃຈດ້ວຍການທົດແທນພຣະຄຸນອັນລົ້ນເກົ້າຂອງບິດາມານດາທີ່ໄດ້ລ້ຽງດູມາຈົນໃຫຍ່...

## CHIANG MIENG: THE BEST PERSUADER IN THE WORLD!

**Kham:** "Everyone seems to think that you are the best persuader in the world and can talk anyone into doing anything. I think that is just hogwash. If you are so good, persuade me into walking into the Mekong River!"

**Chiang Mieng:** "I can't talk people into walking into the river but I can talk people into walking out of the river."

**Kham :** "OK", took 10 steps into the Mekong, turned to Chiang Mieng and said: "Now, try and talk me into walking out of the river!!!"

Chiang Mieng then walked away ... It took Kham a while before he realized that Chiang Mieng just talked him into walking into the Mekong River ...

## ຊຽງໝ້ຽງຈອມຂີ້ໂມ້

**-ຄືນມື້ນຶ່ງ** ພາຍຫລັງທີ່ໄດ້ຍິນຄຳຊ່ຳລືເຣື້ອງຣາວທີ່ເກີດຂຶ້ນກັບທ້າວຄຳບ້ານເໜືອນັ້ນແລ້ວ ທ້າວບຸນທີ່ເປັນຄົນທາງບ້ານໃຕ້ກໍຍ່າງເຂົ້າໄປຫາ ອ້າຍຊຽງໝ້ຽງຈອມຂີ້ໂມ້ນັ້ນໃນທັນທີ..ແລ້ວໃນທັນໃດກັນນັ້ນກໍໄດ້ເປີດໄຟສາຍເຍືອງຂຶ້ນເມືອເທິ່ງທ້ອງຟ້າທີ່ມີດວງດາວປະກາຍແສງຣະຍັບ ຣະຍັບ... ພ້ອມທັງເປັ່ງສຽງອອກມາຢ່າງແຮງໆວ່າ "ຊຽງ !!! ຂ້ອຍໄດ້ຍິນຄຳຊ່ຳລືໄປຊ ອດເຖິງຫູຂ້ອຍວ່າເຈົ້າມີອຸບາຍຕົວະຜູ້ຄົນໃຫ້ຫລົງກົນໄດ້ຢ່າງ ຍອດຢ້ຽມທີ່ສຸດ ໂດຍທີ່ມີທ້າວຄຳໄທບ້ານເໜືອກໍຖືກເຈົ້າຫລອກ ໃຫ້ຍ່າງລົງໄປແຊ່ ຢູ່ໃນແມ່ນ້ຳໄດ້ຢ່າງບໍ່ມີທາງສູ້ "ເອົາລະກ້າເຈົ້າເກັ່ງອີ່ຫລີດັ່ງຄຳ ຊ່ຳລືແບບນັ້ນແທ້ ກໍລອງໆຍ່າງຂຶ້ນໄປຕາມແສງໄຟສາຍທີ່ຂ້ອຍເຍືອງຂຶ້ນເມືອເທິ່ງທ້ອງຟ້ານີ້ເບິ່ງດູ່ ຈະເຮັດໄດ້ສົມຈິງຫລືບໍ່?

**-ຊຽງໝ້ຽງ** : ໂອ້ຍບຸນເອີຍ !!! ຈະໃຫ້ຂ້ອຍຍ່າງຂຶ້ນໄປເທິ່ງທ້ອງຟ້າຕາມແສງໄຟສາຍຂອງເຈົ້າຫັ້ນເບາະມັນງ່າຍໂພດໄປດອກປອກກ້ອຍເຂົ້າປາກ ກໍຍັງຍາກກວ່າ... ແຕ່ຂ້ອຍຈະບໍ່ເຮັດແບບນັ້ນດອກຈະບອກໃຫ້ ເພາະຂ້ອຍຢ້ານວ່າເຈົ້າຈະມອດແສງໄຟສາຍຢູ່ໃນກຳມືຂອງເຈົ້ານັ້ນແລ້ວມັນກໍຈະເຮັດ ໃຫ້ຂ້ອຍຕົກລົງມາຈາກທ້ອງຟ້າຕາຍມັບທ່າຢ່າງບໍ່ຮູ້ເມື່ອ ຂ້ອຍບໍ່ຫລີ້ນນຳເຈົ້າດອກເຣື້ອງແບບນີ້ !!! ແຮະ ໆ ໆ.....

## CHIANG MIENG: THE TOP BRAGGART!

Having heard what happened to Kham, Boun walked to Chiang Mieng one night, turned on his flashlight, aimed the beam into the sky, and said: "I've heard how you tricked Kham into walking into the Mekong River. If you are so good, why don't you walk up the beam of my flashlight into the sky."

**Chiang Mieng:** "It would be very easy for me to walk up the beam of your flashlight into the sky! However, I would not do so because I am afraid that you will turn it off and I will fall from the sky."





